**ມິຊຊາອາທິດທີ 21 ກຳນົດທຳມະດາປີ A**

**ວັນທີ 23 ສິງຫາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 16, 13-20**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດມາເຖິງເມືອງເຊຊາເຣແຫ່ງຟີລິບ, ພຣະອົງຊົງກ່າວຖາມພວກສາວົກວ່າ: "ຄົນທັງຫລາຍເວົ້າກັນວ່າບຸດແຫ່ງມະນຸດແມ່ນໃຜ?" ພວກສາວົກທູນຕອບວ່າ: "ພວກໜຶ່ງວ່າຢວງບັບຕິສຕາ; ພວກໜຶ່ງວ່າເອລີ; ພວກອື່ນອີກວ່າແມ່ນເຢເຣມີຫລືປະພາສົກຜູ້ໃດຜູ້ໜຶ່ງ." ແຕ່ພຣະອົງຊົງກ່າວແກ່ພວກເຂົາວ່າ: "ສ່ວນພວກເຈົ້າເອງເດພວກເຈົ້າວ່າເຮົາແມ່ນໃຜ?" ຊີມອນເປໂຕຣຈຶ່ງທູນພຣະອົງວ່າ: "ພຣະອົງແມ່ນພຣະຄຣິສໂຕພຣະບຸດຂອງພຣະເປັນເຈົ້າຜູ້ຊົງຊີວິດ". ພຣະເຢຊູເຈົ້າຊົງກ່າວຕອບຊີມອນວ່າ: "ຊີມອນລູກຂອງໂຢນາດເອີຍ! ເຈົ້າມີບຸນຫລາຍດ້ວຍເຫດວ່າ ບໍ່ແມ່ນເລືອດເນື້ອຂອງມະນຸດທີ່ໄຂສະແດງເລື່ອງນີ້ໃຫ້ເຈົ້າຮູ້, ແຕ່ແມ່ນພຣະບິດາຂອງເຮົາຜູ້ສະຖິດຢູ່ສະຫວັນ. ດ້ວຍເຫດນີ້, ເຮົາຈຶ່ງກ່າວແກ່ເຈົ້າວ່າ: "ເຈົ້າແມ່ນສີລາແລະຢູ່ເທິງສີລານີ້ເຮົາຈະຕັ້ງພຣະຄຣິສຕະຈັກຂອງເຮົາ, ແລະປະຕູນະລົກຈະບໍ່ມີໄຊຊະນະຕໍ່ພຣະຄຣິສຕະຈັກນັ້ນໄດ້ເລີຍ. ເຮົາຈະມອບກະແຈແຫ່ງອານາຈັກສະຫວັນໃຫ້ເຈົ້າທຸກສິ່ງທີ່ເຈົ້າຈະຜູກມັດໃນແຜ່ນດິນນີ້, ຈະຖືກຜູກມັດໃນສະຫວັນ; ແລະທຸກສິ່ງທີ່ເຈົ້າຈະແກ້ປ່ອຍໃນແຜ່ນດິນນີ້ກໍຈະຖືກແກ້ປ່ອຍໃນສະຫວັນດ້ວຍ." ແລ້ວນັ້ນພຣະອົງກໍເຕືອນພວກສາວົກບໍ່ໃຫ້ເປີດເຜີຍໃຫ້ຜູ້ອື່ນຮູ້ວ່າ: ພຣະອົງແມ່ນພຣະຄຣິສໂຕເຈົ້າ.

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ມທ 16, 13-20**

ຖ້າພວກເຮົາອ່ານສືບຕໍ່ວາຈາພຣະເຈົ້າວັນນີ້ໃນພຣະວໍລະສານທັງສາມເຫລັ້ມ: ມັດເທວ, ມັກໂກ ແລະລູກາກໍຈະເຫັນວ່າ ພຣະເຢຊູເຈົ້າຈະປະກາດໃຫ້ພວກລູກສິດຮູ້ຈັກເປັນເທື່ອທໍາອິດກ່ຽວກັບມະຫາທໍລະມານຂອງພຣະອົງວ່າ: "ພຣະອົງຈະຕ້ອງສະເດັດໄປນະຄອນເຢລູຊາແລມເພື່ອຮັບທໍລະມານຫລາຍຢ່າງຈາກພວກເຖົ້າແກ່, ພວກຫົວໜ້າສົງແລະພວກອາຈານພຣະຄໍາພີ ເພື່ອຈະຖືກປະຫານຊີວິດແລະຈະກັບເປັນຄືນມາໃນວັນທີສາມ" (ມທ 16, 21, ມກ 9, 31-32, ລກ 9, 22). ແຕ່ກ່ອນພຣະອົງຈະສະເດັດຂຶ້ນໄປນະຄອນເຢລູຊາແລມນັ້ນ, ວັນນີ້ພຣະອົງໄດ້ຖາມພວກລູກສິດກ່ຽວກັບຕົວຂອງພຣະອົງ. ຄໍາຕອບຂອງພວກລູກສິດສະທ້ອນໃຫ້ເຫັນວ່າ ພວກເຂົາຍັງບໍ່ທັນຮູ້ຈັກພຣະອົງ. ແຕ່ສໍາລັບຊີມອນເປໂຕ, ທ່ານໄດ້ຮັບການໄຂສໍາແດງຈາກພຣະບິດາເຈົ້າສະຫວັນແລະທ່ານໄດ້ຕອບພຣະເຢຊູເຈົ້າວ່າ: "ພຣະອົງແມ່ນພຣະກຣິສໂຕ ພຣະບຸດຂອງພຣະເປັນເຈົ້າຜູ້ຊົງຊີວິດ". ແລະພວກເຮົາກໍຮູ້ດີວ່າ, ຫລັງຈາກຄໍາປະກາດຄວາມເຊື່ອຂອງຊີມອນເປໂຕ ພຣະເຢຊູເຈົ້າກໍໄດ້ກໍ່ຕັ້ງພຣະກຣິສຕະຈັກຂອງພຣະອົງເທິງສີລາ ອັນໝາຍເຖິງເປໂຕ. ແລະພຣະອົງກໍໄດ້ມອບກຸນແຈໃຫ້ເຂົາອັນເປັນເຄື່ອງໝາຍແຫ່ງອໍານາດໃນການນໍາພາພຣະກຣິສຕະຈັກຂອງພຣະອົງ. ພວກເຮົາອາດຈະມີຄໍາຖາມຂຶ້ນມາວ່າ ຄໍາວ່າ "ສີລາ" ທີ່ພຣະເຢຊູເຈົ້າກ່າວໃນທີ່ນີ້ມີຄວາມໝາຍແນວໃດ? ຄວາມໝາຍທໍາອິດອາດຈະມາຈາກຊື່ຂອງ "ເປໂຕ" ໃນພາສາກຣີກຊຶ່ງໝາຍເຖິງກ້ອນຫີນນ້ອຍ ຫລືສີລາ. ຄວາມໝາຍທີສອງອາດຈະໝາຍເຖິງສິ່ງທີ່ໜັກແໜ້ນແລະທົນທານ ເພື່ອເປັນຮາກຖານໃນການກໍ່ສ້າງພຣະກຣິສຕະຈັກຂອງພຣະອົງ. ແລະຄວາມໝາຍທີສາມຂອງຄໍາວ່າ"ສີລາ"ນີ້ ອາດໝາຍເຖິງຕົວຂອງພຣະເຢຊູເຈົ້າເອງ. ເພາະພຣະອົງເປັນສີລາທີ່ໝັ້ນຄົງຖາວອນ. ດັ່ງທີ່ພຣະເຢຊູເຈົ້າກ່າວໃນຄວາມປຽບທຽບເລື່ອງຄົນສະຫລາດທີ່ສ້າງເຮືອນຂອງຕົນບົນສີລາ. ເຖິງວ່າຈະມີຝົນ, ພະຍຸ, ນໍ້າໄຫລເຊາະກໍຕາມ ແຕ່ເຮືອນນັ້ນກໍຈະບໍ່ເພືອນບໍ່ລົ້ມໄດ້ເລີຍ (ມທ 7, 24-25). ແລະສີລາທີ່ໝັ້ນຄົງນີ້ແມ່ນພຣະເຢຊູກຣິສໂຕເຈົ້ານັ້ນເອງ. ດັ່ງທີ່ພຣະອົງກ່າວໃນວັນນີ້ວ່າ: ອໍານາດຂອງມານຮ້າຍຈະບໍ່ມີໄຊຊະນະຕໍ່ພຣະກຣິສຕະຈັກຂອງພຣະອົງໄດ້ເລີຍ.

ວັນນີ້ພຣະເຢຊູເຈົ້າກໍຈະຖາມພວກເຮົາ ເໝືອນກັບພຣະອົງໄດ້ຖາມພວກລູກສິດວ່າ: ສໍາລັບພວກເຈົ້າ ເຮົາແມ່ນໃຜ? ພວກເຮົາຈະຕອບພຣະອົງຢ່າງໃດ? ຄໍາຕອບຂອງພວກເຮົາຈະມາຈາກການໄຂສໍາແດງຂອງພຣະບິດາເຈົ້າບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ, ລູກຂໍຂອບພຣະຄຸນພຣະອົງທີ່ໄດ້ເລືອກສັນລູກໃຫ້ເປັນລູກຂອງພຣະອົງ, ເປັນພາກສ່ວນໜຶ່ງຂອງພຣະກາຍທິບຂອງພຣະອົງອັນແມ່ນພຣະກຣິສຕະຈັກ. ໂຜດໃຫ້ລູກເປັນໜຶ່ງດຽວກັບພຣະອົງແລະກັບກຣິສຕັງຄົນອື່ນໃນຄວາມເຊື່ອ ເພື່ອຈະໄດ້ເປັນພິຍານເຖິງຄວາມຮັກຂອງພຣະອົງທ່າມກາງຜູ້ທີ່ຍັງບໍ່ຮູ້ຈັກພຣະອົງນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ